

# ໄປສລອງບຸນຫົດສົງອົງຄ໌ພຣະບາງເຈົ້າ
# ກັບ
# ພຣະອາຈານ ວຽງໄຊຍ໌ ສຸດາຣົສ



*ຮູບພາບ : ສີສົມເດດ ສີຫາບາດ*

ໂດຍ : ໂອຣົດ ສີສຸວັນວຽງ

ວັດ ເວລຸວະນາຣາມ

ພ.ສ. ໒໕໔໗ (ຄ.ສ. ໒໐໐໔)

# ຄໍານໍາ

========

## ຂໍຄວາມສຸຂຄວາມຈະເຣີນຈົ່ງມີແກ່ທຸກໆທ່ານ,

ການເຜີຍແຜ່ທັມມະ*໑ ເຂົ້າສູ່ສັງຄົມເປັນວຽກງານຫນຶ່ງທີ່ຊາວພຸທຄວນທໍາ ຕ່າງຄົນກໍຕ່າງທໍາແລ້ວແຕ່ຄວາມເໝາະສົມຂອງສະພາບສັງຄົມນັ້ນແລະຈັງຫວະໂອກາດ.

ດ້ວຍຄວາມເມຕຕາອັນໃຫຍ່ຫລວງຕໍ່ຊາວລາວທີ່ອາສັຍຢູ່ປະເທດຝຣັ່ງເສດ ພຣະອາຈາຣ ທັມມະຣັງສີພິກຂຸ (ວຽງໄຊຍ໌ ສຸດາຣົສ) ໄດ້ສ້າງພຣະບາງອົງໃໝ່ໄວ້ໃຫ້ພວກເຮົາຂາບໄຫວ້ບູຊາແລະພວກເຮົາໄດ້ຈັດບຸນຫົດສົງພຣະບາງທຸກໆປີ.

ການທີ່ຂ້າພະເຈົ້າໄດ້ຂຽນໜັງສືນີ້ ກໍມີຈຸດປະສົງພຽງໜ້ອຍດຽວ ຄືວ່າຢາກໃຫ້ພວກເຮົາຊາວລາວມາສຶກສານໍາກັນວ່າ ຄຣູບາອາຈາຣນັກປຣາດສມັຍກ່ອນແລະພຣະອາຈາຣ ທັມມະຣັງສີພິກຂຸ ທ່ານມີຈຸດປະສົງຢ່າງໃດແທ້? ເພື່ອພວກເຮົາຊາວລາວຈະໄດ້ເຂົ້າໃຈແລະນໍາໄປປະຕິບັດໃຫ້ເກີດປໂຍດແກ່ຕົນເອງແລະສັງຄົມ.ໂດຍສະເພາະແລ້ວພວກໜຸ່ມນ້ອຍ ໃນປັດຈຸບັນ ເພາະແມ່ນພວກເຂົາເຈົ້າຈະເປັນຜູ້ສືບທອດເຈຕນາຣົມຂອງຄຣູບາອາຈາຣນັກປຣາດໃຫ້ຍືນຍົງໄປຕລອດການ...

---

*໑ ທັມມະ = ຄໍາສອນທາງສາສນາ, ຄວາມດີ, ເລື້ອງ, ເຫຕ, ການກະທໍາ (Dharma)
(ໜ້າ ໔໐໓ ) ໑. ທັມມະ ໃນສໍານວນທາງສາສນາມີຄວາມໝາຍຫລາຍຢ່າງ ເພາະຄໍາວ່າທັມມະເປັນພາສາພື້ນເມືອງຂອງຊາວຊົມພູທວີປ (=ທຸກວັນນີ້ໄດ້ແກ່ປະເທດອິນເດັຍ). ແຕ່ໃນທີ່ນີ້ໝາຍເອົາຄໍາສະເພາະໃນຄໍາສອນທາງພຸທສາສນາເທົ່ານັ້ນ.

ຂ້າພະເຈົ້າມີຄວາມລັງເລໃຈເປັນທີ່ສຸດໃນຕອນຕົ້ນ ເພາະຄວາມຮູ້ຄວາມສາມາດມີຈຳກັດ ແຕ່ມາຄິດອີກຄັ້ງ ກໍຮູ້ສຶກມີກຳລັງໃຈ ຈຶ່ງໄດ້ຕັດສິນໃຈຂຽນໜັງສືນີ້ຂຶ້ນມາ ເພາະຍັງມີຄຣູບາອາຈານແລະອາວຸໂສທີ່ຮູ້ ໃຫ້ຄຳແນະນຳໃນສິ່ງທີ່ບໍ່ພໍ ທ່ານກໍຈະເພີ້ມເຕີມໃຫ້ ແລະຕັດອອກ ໃນສິ່ງທີ່ເກີນ ຂໍ້ບົກຜ່ອງທີ່ມີໃນໜັງສືນີ້ ເປັນຂອງຂ້າພະເຈົ້າ ບໍ່ກ່ຽວກັບຫລັກທັມມະຂອງພຣະພຸທເຈົ້າ ຊຶ່ງເປັນສັດຈະທັມ.*໒.
ຂໍໄດ້ຮັບຄວາມເຄົາຣົບແລະຄວາມປາຖນາດີຈາກຂ້າພະເຈົ້າດ້ວຍ.

ປາຣີສ, ທີ ໓໐ ພຶສພາ ໒໐໐໔

ໂອຣົດ ສີສຸວັນວຽງ
ລູກສິດວັດພຸທທະເມຕຕາປະເທດຝຣັ່ງເສດ
**WAT BUDDHAMETTA**
44, avenue Villeneuve Saint-Georges
94600 CHOISY-LE-ROI
FRANCE
Tél. (33) 01.48.90.91.35

---

*໒ ສັດຈະທັມ = ໑. ຄວາມຈິງ (Truth ) ( ໜ້າ ໕໒໗ )
໒. ຄຳສອນທີ່ສະແດງຄວາມຈິງ
໓. ສັດຈະທັມ ໃນຄວາມໝາຍທາງສາສນາພຸທໂດຍສະເພາະນັ້ນ ໝາຍເຖິງຂໍ້ທີ ໒ ຄື : ຄຳສອນທີ່ສະແດງຄວາມຈິງເທົ່ານັ້ນ.

# ສາຣະບານ


## ຂອງດີວັດພຸທທະເມຕຕາ

໑. ຕຳນານຫຍໍ້ຂອງພຣະບາງ : ກ. ຄັ້ງພຸທທະກາລ
ຂ. ສມັຍພຣະບາດສົມເດັດພຣະເຈົ້າຟ້າງຸ່ມ
ຄ. ພຣະບາງເຈົ້າອົງໃໝ່
໒. ວິຈັຍພຣະບາງ : ກ. ຄຸນລັກສະນະທາງດ້ານວັດຖຸ
ຂ. ຈຸດປະສົງ
໓. ບຸນຫົດສົງພຣະບາງເຈົ້າອົງໃໝ່

## ສາມັກຄີທັມ

**ຄວາມໝາຍ** ໑. ສາມັກຄີສອງທາງ
໒. ຜົລຂອງຄວາມສາມັກຄີ
໓. ໂທດຂອງການແຕກສາມັກຄີ
໔. ການປູກຄວາມສາມັກຄີທັມ

## ພຣົມວິຫາຣທັມ

໑. ອະທິບາຍທົ່ວໄປ
໒. ກ. ຄວາມໝາຍ : - ພຣົມ ໔ ໜ້າ
- ພຣົມວິຫາຣ ໔
ຂ. ອະທິບາຍສັບ
໓. ຫລັກທັມ ແລະ ຄວາມໝາຍ
໔. ສລູບ

## ຄຳໄຫວ້ພຣະບາງ


**- ໝາຍເຫດ -**

ຄວາມໝາຍແລະຄຳອະທິບາຍຂອງຄຳສັບທັງໝົດນີ້ ໄດ້ອີງໃສ່ປື້ມ "ປະມວລສັບສາສນາ" ຂອງ ພ.ອ. ປີ່ນ ມຸທຸກັນຕ໌ ເປັນຫລັກ.

ອ. = ອະທິບາຍ ມ. = ຄວາມໝາຍ

# ຂອງດີວັດພຸທທະເມຕຕາ

## ໑. ຕຳນານຫຍໍ້ຂອງພຣະບາງ

ການເວົ້າເຖິງຕຳນານຫຍໍ້ຂອງພຣະບາງນີ້ ຂ້າພະເຈົ້າຈະເວົ້າໂດຍຫຍໍ້ທີ່ສຸດ ພໍໃຫ້ທ່ານຜູ້ອ່ານຊາບແບບລວມໆເທົ່ານັ້ນ ເພາະຈະເຮັດໃຫ້ເລື້ອງເສັຍຣົສຊາດ ຊຶ່ງບໍ່ແມ່ນເປົ້າໝາຍ ໃນການຂຽນໜັງສືໃນຄັ້ງນີ້. ຫາກທ່ານຜູ້ອ່ານຕ້ອງການຊາບລາຍລະອຽດກວ່ານີ້ ທ່ານຈະຫາອ່ານໄດ້ທີ່:

- ປື້ມ " ພຣະບາງເຈົ້າອົງໃໝ່ "
  ຮຽບຮຽງແລະຈັດພິມໂດຍ: ມະໄລສອນ ປັນຍາ
  ມັນທຸຣາດ ສຸນດາຣາ
  ໂດຍ: ມູລນິທິ ສີສວ່າງ ວັທນາ
  ຊຶ່ງພິມແຈກຢາຍຄັ້ງພຸທທະພິເສກ ພຣະບາງເຈົ້າອົງໃໝ່ ວັນທີ ໑-໔-໓-໕ ມິຖຸນາ ໒໐໐໐
- " ພື້ນພຣະບາງ" ສບັບ: ວຽງຈັນທ໌-ຫໍສມຸດແຫ່ງຊາດ ປີ ຄ.ສ. ໑໙໗໙. ຈັດພິມຄັ້ງທີ ໒ ໂດຍ: ສະມາຄົມ ຫລວງພຣະບາງ ທີ່ປາຣີສ ເດືອນພຶສຈິກາປີ ຄ.ສ. ໒໐໐໑.

## ກ. ຄັ້ງພຸທທະກາລ

... ພຣະນະຄອນ ກບິລພັສດ໌ ອັນເປັນແວ່ນແຄວ້ນທີ່ປະທັບຢູ່ຂອງພຣະເຈົ້າສາກະຍະ ຊຶ່ງ ເປັນພຣະຍາຕິຂ້າງຝ່າຍພຣະພຸທທະບິດາ.

ແລະ

ພຣະນະຄອນເທວະທະຫະ ອັນເປັນແວ່ນແຄວ້ນທີ່ປະທັບຢູ່ຂອງເຈົ້າໂກລິຍະ ຊຶ່ງເປັນພຣະຍາຕິຂ້າງຝ່າຍພຣະພຸທທະມານດາ.

ຊາວນາທັງສອງພຣະນະຄອນນີ້ ອາສັຍນ້ຳໃນແມ່ນ້ຳໂຣຫິນີເຮັດນາຮ່ວມກັນໂດຍປົກກະຕິສຸຂ.... ຕໍ່ມາຄັ້ງໜຶ່ງເກີດພັຍແຫ້ງແລ້ງ ຝົນກໍຕົກໜ້ອຍ ຊາວນາທັງສອງພຣະນະຄອນເລີຍຍາດແຍ່ງນ້ຳໃນແມ່ນ້ຳໂຣຫິນີ ບໍ່ນານເຫຕການກໍຄ່ອຍໆຄັ່ງຕຶງຂຶ້ນ

ເລີ້ມຈາກການວິວາດກັນສ່ວນບຸກຄົນ ຍົກພັກພວກປະທະກັນ ດ່າວ່າກະທົບກະເທກກັນ ລາມໄປເຖິງຊາຕິໂຄດຣ ຂອງຣາຊວົງສ໌ທັງສອງພຣະນະຄອນ ໃນທີ່ສຸດທັງສອງ ພຣະນະຄອນກໍໄດ້ຍົກກອງທັບມາ ປະຊິດຝັ່ງແມ່ນ້ຳໂຣຫິນີເພື່ອເຣັດສົງຄາມກັນ.

ເມື່ອພຣະບໍຣົມສາສດາຊຮົງຊາບເຫດການ ກໍສເດັດໄປຫ້າມສົງຄາມຍາດແຍ່ງນ້ຳລະຫວ່າງສອງພຣະນະຄອນ ໂດຍມີໃຈຄວາມສຳຄັນຕອນໜຶ່ງວ່າ: " ລະຫວ່າງນ້ຳກັບຊີວິດ ຖ້າປຽບທຽບກັນແລ້ວ ສິ່ງໃດສຳຄັນກວ່າກັນ " ພຽງເທົ່ານີ້ທັງສອງຝ່າຍກໍໄດ້ສຕິ .....ພຣະພຸທອົງກໍຊຮົງແນະນຳໃຫ້ຜັດປ່ຽນກັນເອົານ້ຳ.

ຕໍ່ເຫດການໃນຄັ້ງນີ້ ພຸທທະສາສນິກະຊົນຜູ້ຮູ້ແຈ້ງໃນທັມມະ ເຫັນເຖິງອານຸພາບແຫ່ງພຣະທັມທີ່ພຣະອົງຊຮົງສະແດງໃນຄັ້ງນັ້ນ ເປັນເຫດອັສຈັນຍິ່ງໜັກແລະເປັນມົງຄົລ*໑ ຈຶ່ງໄດ້ສ້າງພຣະພຸທຮູບປາງນີ້ຂຶ້ນເອີ້ນວ່າ: " ປາງຫ້າມພຣະຍາຕິແຍ່ງນ້ຳໃນສມຸທຣ " ທີ່ປະເທດສຣີລັງກາ.

## ຂ. ສມັຍພຣະບາດສົມເດັດພຣະເຈົ້າຟ້າງຸ່ມ

ໃນສັຕຕະວັດທີ ໗ ພຣະຣາຊາແຫ່ງກຸງລັງກາສິງຫົນປະເທດ (ປະເທດ ສຣີລັງກາ) ໄດ້ຖວາຍ "ພຣະບາງ" ເປັນຂອງຂວັນຣາຊບັນນາການ ໃນການເຜີຍແຜ່ພຣະພຸທທະສາສນາແດ່ພຣະເຈົ້າອິນທະວໍຣະມັນທີ ໑ ພຣະຣາຊາແຫ່ງກັມພຸດປະເທດ(ປະເທດກັມພູຊາ).

ຈາກນັ້ນໃນປີ ຄ.ສ. ໑໓໕໔ (ພ.ສ. ໑໘໙໘) ພຣະເຈົ້າມະຫາຊີວິຕ ປາຣະມັນທະເຂມະຣາຊາແຫ່ງກັມພຸດປະເທດ ໄດ້ມອບ "ພຣະບາງ" ເປັນຂອງຂວັນຖວາຍຕໍ່ໃຫ້ພຣະບາດສົມເດັດ ພຣະເຈົ້າຟ້າເລີດຫລ້າທໍຣະນີມະຫາຣາຊ (ເຈົ້າຟ້າງຸ່ມ) ໂດຍມີພຣະປະສົງໃນການເຜີຍແຜ່ພຣະພຸທທະສາສນາຂຶ້ນມາທາງອານາຈັກລ້ານຊ້າງ...

## ຄ. ພຣະບາງເຈົ້າອົງໃໝ່

ພຣະບາງເຈົ້າອົງໃໝ່ ຫລື " ພຣະພຸທທະຊິນະສີນຣັຕນະສາກະຍະມຸນີ " ໄດ້ຖືກສ້າງຂຶ້ນໂດຍ ພຣະທັມມະຣັງສີພິກຂຸ (ວຽງໄຊຍ໌ ສຸດາຣົສ) ໄດ້ທຳການພຸທທະພິເສກເມື່ອ ວັນທີ ໑-໔-໓ ມິຖຸນາ ໒໐໐໐ ທີ່ວັດພຸທທະເມຕຕາປະເທດຝຣັ່ງເສດແລະໄດ້ເຣັດບຸນຫົດສົງພຣະບາງເຈົ້າອົງໃໝ່ຄັ້ງແຣກ ເມື່ອວັນທີ ໕ ມິຖຸນາ ໒໐໐໐ ທີ່ວັດເວລຸວະນາຣາມ.

---

*໑ ມົງຄົລ = ສິ່ງທີ່ເປັນເຫດໃຫ້ຈະເຣີນກ້າວໜ້າ (Auspicious thing) (ໜ້າ ໕໗໑ )

# ໔. ວິຈັຍພຣະບາງເຈົ້າ

## ກ. ຄຸນລັກສະນະທາງດ້ານວັດຖຸ

## - ພຣະບາງອົງເດີມ

ພຣະບາງອົງເດີມ ຫລື " ພຣະພຸທທະລາວັນ " ເປັນພຣະພຸທທະຮູບອົງຫນຶ່ງທີ່ສັກສິດ ສຳລັບຊາວລາວເຮົາຖືວ່າເປັນອົງມິ່ງຂວັນຂອງປະເທດລ້ານຊ້າງ ພຣະບາງອົງເດີມ ຖືກສ້າງຂຶ້ນດ້ວຍໂລຫະ ໕ ຢ່າງ ເອີ້ນວ່າ: " ປັນຈະໂລຫະ " ແລະສ່ວນມາກແມ່ນໂລຫະຄຳ ຊຶ່ງຕັນທັງພຣະອົງ ໃນລັກສະນະທ່າຢືນ ພຣະກອນ*໔ ທັງສອງຂ້າງແນບກັບພຣະວໍຣະກາຍ ເດ່ພຣະກອນສ່ວນປາຍໄປຂ້າງໜ້າ ຍົກພຣະຫັດ*໕ ໂດຍປາຍນິ້ວດັດຊະນີຊີ້ຂຶ້ນທາງເບື້ອງບົນ ໃຈພຣະຫັດເບີກໄປຂ້າງໜ້າ ພຣະບາງມີນ້ຳໜັກສຸດທິປະມານ ໕໘ ກິໂລກຣາມ ແລະ ມີຄວາມສູງປະມານ ៣໐ ຊັງຕີແມັດ.

## - ພຣະບາງເຈົ້າອົງໃໝ່

ພຣະບາງເຈົ້າອົງໃໝ່ຖືກສ້າງຂຶ້ນດ້ວຍໂລຫະ ៣ ຢ່າງ (៣ ກະສັຕຣ) ຄື: ທອງ, ເງິນແລະຄຳ ຊຶ່ງຕັນທັງພຣະອົງ ໃນລັກສະນະທ່າທາງເໝືອນກັບອົງເດີມ ຕ່າງແຕ່:

- ຄວາມສູງ
- ນ້ຳໜັກ
- ຖານພຣະ

ທັງພຣະບາງອົງເດີມແລະອົງໃໝ່ ໄດ້ຖືກບັນຈຸພຣະບໍຣົມມະສາຣີຣິກະທາຕຸ໌*໖ ເຊັ່ນດຽວກັນ ທັງສອງພຣະອົງ.

---

*໔ ພຣະກອນ = ແຂນ

*໕ ພຣະຫັດ = ຝາມື

*໖ ພຣະບໍຣົມມະສາຣີຣິກະທາຕຸ໌ = ກະດູກຂອງພຣະພຸທເຈົ້າ.

## ຂ. ຈຸດປະສົງ

## - ພຣະບາງອົງເດີມ

ວັດຖຸປະສົງໃນການສ້າງພຣະບາງອົງເດີມນີ້ ກໍເປັນການຍາກທີ່ຈະເຂົ້າໃຈ ຈຸດມຸ້ງໝາຍອັນແທ້ຈິງຂອງຄຣູບາອາຈານນັກປຣາດສມັຍກ່ອນ ເພາະກາລເວລາກໍລ່ວງເລີຍມານານແສນນານແລ້ວ ແຕ່ເຮົາກໍອາດຮູ້ໄດ້ດ້ວຍເຫດຜົລ ໂດຍໃຊ້ປັນຍາສຶກສາຈາກພຣະພຸທທະປວັດ ໃນຄັ້ງສເດັດໄປຫ້າມສົງຄາມຍາດແຍ່ງນໍ້າ ລະຫວ່າງ ພຣະຍາຕິຂ້າງຝ່າຍພຣະພຸທທະບິດາແລະພຣະຍາຕິຂ້າງຝ່າຍພຣະພຸທທະມານດາ ດັ່ງນີ້ :

- **ເພື່ອລະລຶກເຖິງອານຸພາບແຫ່ງພຣະທັມ ທີ່ພຣະພຸທທະອົງໄດ້ຊຣົງສະແດງໃນຄັ້ງນັ້ນ.**
- **ເປັນການເຕືອນສຕິຜູ້ປົກຄອງ, ພົລເມືອງໃຫ້ຢູ່ຮ່ວມກັນໂດຍສັນຕິຢ່າຜິດຖຽງກັນ.**
- **ໃຫ້ສາມັກຄີຮັກແພງແລະໃຫ້ອະພັຍຊຶ່ງກັນແລະກັນ.**

ໆ ລ ໆ

## - ສມັຍພຣະເຈົ້າຟ້າງູ່ມ

ພຣະເຈົ້າຟ້າງູ່ມຍົກທັບກັບຄືນບ້ານເກີດເມືອງນອນ ແລະໄດ້ທ້ອນໂຮມຫົວເມືອງນ້ອຍໃຫຍ່ ເຂົ້າເປັນອານາຈັກລ້ານຊ້າງໃນຄັ້ງນັ້ນ ພຣະເຈົ້າມະຫາຊີວິຕປາຣະມັນທະເຂມະຣາຊາ ພຣະມະຫາຣາຊາແຫ່ງກັມພຸດປະເທດ ຊຶ່ງເປັນພຣະບິດາບຸນທັມຂອງພຣະເຈົ້າຟ້າງູ່ມ ໄດ້ມອບຖວາຍພຣະບາງໃຫ້ແກ່ພຣະເຈົ້າຟ້າງູ່ມ ໂດຍມີພຣະປະສົງພໍຈະສັນນິຖານໄດ້ ດັ່ງນີ້:

- **ເພື່ອເປັນການເຜີຍແຜ່ພຣະພຸທທະສາສນາຂຶ້ນມາທາງອານາຈັກລ້ານຊ້າງ.**
- **ເພື່ອເປັນການລົດຜ່ອນຄວາມຫ້ຽນຂອງພຣະເຈົ້າຟ້າງູ່ມ ຜູ້ຊຶ່ງເປັນນັກຮົບທີ່ເກັ່ງກ້າສາມາດ ບໍ່ຍ່ອນຢ້ານສິ່ງໃດໝົດ ພຣະອົງມີອຳນາດອັນເດັດຂາດໄປທົ່ວທຸກທິດ.**
- **ເປັນການເພີ້ມບາຣະມີໃຫ້ແກ່ພຣະເຈົ້າຟ້າງູ່ມແລະກອງທັບຂອງພຣະອົງ.**

ໆ ລ ໆ

## - ພຣະບາງເຈົ້າອົງໃໝ່

ດ້ວຍຄວາມເມຕຕາກະຣຸນາອັນສູງສົ່ງ ຄວາມຕັ້ງໃຈອັນແນ່ວແນ່ ໂດຍບໍ່ສົນໃຈຕໍ່ອຸປະສັກໃດໆທັງສິ້ນ ພຣະອາຈາຣທັມມະຣັງສີພິກຂຸ ( ວຽງໄຊຍ໌ ສຸດາຣົສ) ໄດ້ຕັດສິນໃຈສ້າງພຣະພຸທທະຮູບປາງອົງໃໝ່ ຊຶ່ງຈຳລອງຈາກອົງເດີມ ໄວ້ໃຫ້ຊາວລາວຂາບໄຫວ້ບູຊາດັ່ງທີ່ພວກເຮົາໄດ້ເຫັນກັນຢູ່ທຸກວັນນີ້.

ໂດຍມີຈຸດປະສົງຫລັກດັ່ງນີ້:

- **ໃຫ້ເປັນຫລັກເປັນແກ່ນແກ່ພຣະພຸທທະສາສນາ.**
- **ໃຫ້ເປັນຈຸດຣວມຂອງຊາວລາວອົພຍົບທີ່ປະເທດຝຣັ່ງເສດ.**

ໆ ລ ໆ

## ໓. ບຸນຫົດສົງພຣະບາງເຈົ້າອົງໃໝ່

ພຣະເຖຣະນຸເຖຣະ ພຣະຍາຕິວົງສ໌ຣາຊວົງສ໌ລ້ານຊ້າງຮົ່ມຂາວ ຜູ້ອາວຸໂສ ບັນດາສະມາຄົມ ບໍຣິສັດຕ່າງໆ ພ້ອມທັງຊາວລາວທີ່ປະເທດຝຣັ່ງເສດ ໄດ້ຕົກລົງເຫັນດີ ກຳນົດເອົາວັນອາທິດໃນຊ່ວງວັນພັກຣາຊການ « Pentecôte» (ທ້າຍເດືອນພຶສພາ ຫລື ຕົ້ນເດືອນມິຖຸນາ) ເປັນວັນບຸນຫົດສົງພຣະບາງເຈົ້າອົງໃໝ່.

ວັນນີ້ພຣະອາຈາຣ ວຽງໄຊຍ໌ ສຸດາຣົສ ຈະນຳທ່ານໄປບຸນຫົດສົງພຣະບາງທີ່ວັດເວລຸວະນາຣາມ ຖ້າຈະທຽບກັບໄປຊົມສວນໝາກໄມ້ ບໍ່ພຽງແຕ່ໄດ້ເຫັນຕົ້ນເຫັນໃບລັກສະນະສີສັນຂອງໝາກໄມ້ນາໆພັນເທົ່ານັ້ນ ທ່ານຈະໄດ້ລີ້ມຣົສໝາກໄມ້ດ້ວຍຕົວທ່ານເອງ ກ່ອນກັບ ຢາກຈະຖືຕິດໄມ້ຕິດມືໄປຕ້ອນຄົນທາງບ້ານກໍຍັງໄດ້.

ທ່ານທີ່ເຄົາຣົບ ຈາກການວິຈັຍ " ພຣະບາງ " ໂດຍຫຍໍ້ດັ່ງທີ່ໄດ້ເວົ້າມາຂ້າງເທິງນັ້ນເຮົາພໍຈະຖອດເອົາໃຈຄວາມສຳຄັນໄດ້ວ່າ ຄຣູບາອາຈາຣແຕ່ລະຍຸກແຕ່ລະສມັຍ ທ່ານມີຈຸດປະສົງຢ່າງໃດແທ້ ? ເພື່ອພວກເຮົາຈະນຳມາເປັນບົດຮຽນ ແລະນຳໃຊ້ໃຫ້ເປັນປໂຍດແກ່ຕົນເອງແລະສ່ວນຣວມ ສັງເກດເຫັນໄດ້ວ່າ ໃນແຕ່ລະຍຸກແຕ່ລະສມັຍ ຄຣູບາອາຈາຣນັກປຣາດຕ່າງກໍມີຈຸດປະສົງໃນແນວດຽວກັນ.

ຫລັກໃຫຍ່ໆ ກໍຄື :

- **ຄວາມສງົບ**
- **ຄວາມຮັກ**
- **ຄວາມສາມັກຄີ**

ໆ ລ ໆ

ຊາວລາວເຮົາຄວນຈະສຶກສາໃຈຄວາມສຳຄັນກ່ຽວກັບພຣະບາງ ການທີ່ພວກເຮົາເຮັດບຸນຫົດສົງພຣະບາງໃນແຕ່ລະປີ ກໍເປັນໂອກາດອັນດີອັນໜຶ່ງທີ່ຈະຊ່ວຍ " ເຕືອນສຕິ " ຊາວລາວທຸກຄົນ ໃຫ້ຣະລຶກເຖິງສາຣະອັນສຳຄັນທີ່ຄຣູບາອາຈາຣນັກປຣາດໄດ້ຝາກໄວ້ໃນອົງພຣະບາງ ອານຸພາບຂອງພຣະບາງທີ່ພວກເຮົາເຫັນໄດ້ຢ່າງຊັດເຈນ ກໍຄືການເຕົ້າໂຮມກັນໃນງານບຸນຄັ້ງນີ້ ຫລາຍສະມາຄົມເຂົ້າຮ່ວມເປັນເຈົ້າພາບ ພີ່ນ້ອງຊາວລາວເປັນພັນຄົນໄດ້ມາເຮັດບຸນຮ່ວມກັນ ກິນເຂົ້າດ້ວຍກັນ ... ມື້ສັນວັນດີແບບນີ້ຫາຍາກທີ່ສຸດ ນັບຕັ້ງແຕ່ຊາວລາວເຮົາອົພຍົບມາອາສັຍຢູ່ປະເທດຝຣັ່ງເສດ ຄົງບໍ່ມີການຊຸມນຸມໃດໆທີ່ມີລັກສະນະແບບນີ້ຈັກເທື່ອ.

**ຕໍ່ເຫດການອັນເປັນມົງຄົລແກ່ພີ່ນ້ອງຊາວລາວເຮົານີ້ ຂ້າພະເຈົ້າຢາກຈະຂນານນາມພຣະບາງວ່າ ເປັນ " ສັນຍາລັກແຫ່ງຄວາມສາມັກຄີທັມ " ... ແລະບໍ່ຮູ້ວ່າອີກດົນປານໃດນໍ ! ຊາວລາວໃນທົ່ວໂລກ ຈະໄດ້ຮ່ວມສລອງບຸນຫົດສົງພຣະບາງໃນວັນດຽວກັນເຊັ່ນນີ້ ...**

# ສາມັກຄີທັມ

ສະຖາປານິກແລະວິສະວະກອນ ອອກແບບອາຄານ ຕ່າງກໍເລືອກໃຊ້ວັສດຸກໍ່ສ້າງທີ່ມີຄຸນນະພາບດີ ເພື່ອຈະໄດ້ສິ່ງກໍ່ສ້າງທີ່ມີຊວດຊົງງາມ ແຂງແຮງທົນທານ ສະດວກສະບາຍ ແລະໃຫ້ຜູ້ຢູ່ອາສັຍໄດ້ຮັບປໂຍດຫລາຍທີ່ສຸດ.

ອາຄານບ້ານຊ່ອງແລະສິ່ງກໍ່ສ້າງຕ່າງໆນັ້ນ ເກີດຂຶ້ນດ້ວຍເຫດປັດຈັຍຫລາຍຢ່າງລວມຕົວກັນສັນໃດ ໃນໝູ່ຄນະຫລືສັງຄົມ ຍ່ອມຕ້ອງການຄວາມສາມັກຄີປຸ່ມລຸມກັນສັນນັ້ນ ເພື່ອຄວາມຈະເຣີນກ້າວຫນ້າ ...

## ຄວາມໝາຍ

" ***ຄວາມສາມັກຄີ*** " * ຄືຄວາມພ້ອມພຽງກັນ (unity) ໝາຍຄວາມວ່າ ຕັ້ງແຕ່ສອງຄົນຂຶ້ນໄປ ມີຄວາມຄິດຮ່ວມກັນ ຮັກນັບຖືກັນ.

ບັນຫາທີ່ຍົກຂຶ້ນມາພິຈາຣະນາ ໔ ປະເດັນ :

໑. ສາມັກຄີສອງທາງ

໒. ຜົລຂອງຄວາມສາມັກຄີ

໓. ໂທດຂອງການແຕກສາມັກຄີ

໔. ການປູກຄວາມສາມັກຄີທັມ

ພຽງ ໔ ຈຸດໃຫຍ່ເທົ່ານີ້ ຄົງຈະພຽງພໍໃນການພິຈາຣະນາບັນຫາຄວາມສາມັກຄີ ເພາະຂໍ້ປີກຍ່ອຍຕ່າງໆ ກໍລວມຢູ່ໃນ ໔ ຈຸດນີ້ແລ້ວ. ຕໍ່ໄປນີ້ຂ້າພະເຈົ້າຈະໄດ້ວິຈັຍເປັນຂໍ້ໆ ຂໍທ່ານຜູ້ອ່ານຈົ່ງຕິດຕາມຕໍ່ໄປ.

## ໑. ສາມັກຄີສອງທາງ

ບຸກຄົນໃດມີຄວາມສາມັກຄີຫລືບໍ່ ເຮົາຈະຮູ້ໄດ້ຢ່າງໃດ? ບັນຫານີ້ມີຈຸດເບິ່ງຢູ່ ໒ ຈຸດຄື ຕອນທີ່ເຂົາເຈົ້າສະແດງອອກໃນການເຮັດວຽກງານ ແລະ ຕອນທີ່ເຂົາເຈົ້າສະແດງຄວາມນຶກຄິດອອກທາງຈິຕໃຈ ຫລືຈະເວົ້າໃໝ່ໃຫ້ເຂົ້າໃຈງ່າຍໆ ຄື :

**ກ.** ຄວາມສາມັກຄີທາງກາຍ **ຂ.** ຄວາມສາມັກຄີທາງຈິຕໃຈ

---

*ຈາກປະມວລສັບສາສນາ ໜ້າ ໗໔໓ ຂອງ ພ.ອ. ປິ່ນ ມຸທຸກັນຕ໌

**ກ. ຄວາມສາມັກຄີທາງກາຍ** ຄືການທຳງານທາງກາຍນີ້ເອງ ຊ່ວຍກັນເຮັດຄົນລະໄມ້ລະມື ຫລືການຊຸມນຸມເພື່ອວຽກງານອັນໃດອັນຫນຶ່ງ ແຕ່ລະຄົນກໍມາຮວມກັນຕາມທີ່ໄດ້ຕົກລົງກັນໄວ້ ພຶດຕິການດັ່ງກ່າວນີ້ ກໍຕົງກັບທີ່ເຮົາໄດ້ໃຫ້ຄວາມໝາຍຂອງຄວາມສາມັກຄີວ່າ " ຄວາມພ້ອມພຽງກັນ " ນີ້ເອງ.

ໃນຂະບວນການເຮັດວຽກງານນັ້ນ ຍ່ອມມີການແບ່ງປັນວຽກ ຕາມຄວາມເໝາະສົມແລະຄວາມສາມາດຂອງແຕ່ລະຄົນເຊັ່ນ :

- ບາງຄົນເຮັດວຽກທາງປາກເວົ້າ
- ບາງຄົນເຮັດວຽກທາງຮ່າງກາຍ
- ບາງຄົນເຮັດວຽກທາງຄວາມຄິດ

ຄົນເຖົ້າຄົນແກ່ທີ່ຢືນຢູ່ຂ້າງໆ ຄອຍສອດຊ່ອງດູແລຄວາມຮຽບຮ້ອຍ ໂດຍບໍ່ຫວັ່ນເກງຕໍ່ແດດຝົນລົມແຮງ ແມ່ຍິງຢູ່ຫ້ອງຄົວຕຽມອາຫານໄວ້ຄອຍຖ້າ ຫລືຄົນອື່ນໆທີ່ຄອຍໃຫ້ກຳລັງໃຈ ຄົນເຫລົ່ານີ້ ກໍຖືໄດ້ວ່າມີຄວາມສາມັກຄີທາງກາຍ ທັງນີ້ແລະທັງນັ້ນຖືເອົາ " ເຈຕຕະນາ " ເປັນເກນ.

**ຂ. ຄວາມສາມັກຄີທາງຈິດໃຈ** ໝາຍເຖິງການງານທີ່ທຳໄປດ້ວຍຄວາມພໍອົກພໍໃຈສມັກໃຈ ຮັກນັບຖືກັນ ຈິດໃຈຕົງກັນ ຫວັງດີຕໍ່ກັນ...

ຄວາມສາມັກຄີທີ່ແທ້ຈິງ ໝາຍເຖິງການຮວມກັນທາງໃຈ ແມ້ຈະຢູ່ກັນຄົນລະຫົວເມືອງ ກໍສາມັກຄີກັນໄດ້ ຊຶ່ງທາງສາສນາພຸທ ເອີ້ນວ່າ " ສາມັກຄີທັມ ". ຈາກໃຈຄວາມຂອງຄວາມສາມັກຄີທັມຂ້າງເທິງນີ້ ຊີ້ໃຫ້ເຮົາເຫັນວ່າ ຈະເບິ່ງແຕ່ຄວາມພ້ອມພຽງກັນທາງກາຍດ້ານດຽວ ກໍຍັງບໍ່ແມ່ນ ເຊັ່ນຄົນຕັ້ງຮ້ອຍຄົນ ຖືກບັງຄັບໃຫ້ເຮັດວຽກຮ່ວມກັນໂດຍທີ່ພວກເຂົາບໍ່ມີຄວາມສມັກໃຈແມ້ແຕ່ໜ້ອຍດຽວ ງານຊຸມນຸມທີ່ມີຄົນເຂົ້າຮ່ວມຕັ້ງພັນຄົນ ຈະເໝົາເອົາວ່າ ເຂົາມີຄວາມສາມັກຄີກັນ ກໍບໍ່ແມ່ນເຊັ່ນກັນ ເພາະເຂົາມາດ້ວຍຄວາມຈຳເປັນ ຈິດໃຈກໍບໍ່ໄດ້ຮັກກັນ ແຕ່ຄົນທີ່ມີຄວາມຄິດຮ່ວມກັນ ນັບຖືກັນ ແມ້ຈະຢູ່ກັນຄົນລະປະເທດ ກໍສາມັກຄີກັນໄດ້.

**ດ້ວຍເຫດຜົລຂ້າງເທິງນີ້ " ສາມັກຄີທັມ " ຈຶ່ງຖືເອົາຈິດໃຈເປັນຫລັກ.**

## ໘. ຜົລຂອງຄວາມສາມັກຄີ

ຄວາມພ້ອມພຽງກັນເປັນຫນຶ່ງໃນຫລາຍສາຍເຫດສຳຄັນ ທີ່ນຳມາຊຶ່ງຄວາມສຳເລັດ ຄວາມຈະເຣີນກ້າວໜ້າ ໃນການດຳຣົງຊີວິດຂອງຄົນເຮົາ ແລະເປັນທາງແຫ່ງຄວາມສຸຂ ເພາະຢ່າງໜ້ອຍກໍໄດ້ຄວາມສຸຂທາງໃຈເປັນອາຣົມ.

ຄົນບູຮານແຕ່ກ່ອນເຄີຍສັ່ງສອນໄວ້ ເຊັ່ນເຮົາຈະເຫັນໄດ້ຈາກສຸພາສິດ "ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່ ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ ".

- ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່ ໝາຍເຖິງ ຄວາມສາມັກຄີທາງກາຍ
- ໄພ່ບໍ່ພ້ອມແປງບ້ານບໍ່ເຮືອງ ໝາຍເຖິງ ຄວາມສາມັກຄີທາງໃຈ

ຍັງມີວຽກຫລາຍດ້ານທີ່ພວກເຮົາເຮັດຜູ້ດຽວບໍ່ໄດ້ ຈະເຮັດໄດ້ ກໍຕໍ່ເມື່ອໄດ້ຮັບຄວາມຮ່ວມໄມ້ຮ່ວມມືທັງທາງກາຍແລະທາງໃຈຈາກຫລາຍຄົນ ເຊັ່ນ:

- ງານອາຊີບທີ່ຕ້ອງເຮັດເປັນໝູ່ຄນະ
- ການປ້ອງກັນຄວາມສງົບ ປ້ອງກັນພັຍ
- ຄວາມໝັ້ນຄົງຂອງຊາຕ
- ງານບຸນຫລືງານຫາຄວາມມ່ວນຊື່ນບັນເທີງໃຈ

ໆ ລ ໆ

## ໙. ໂທດຂອງການແຕກສາມັກຄີ

ຄວາມເສັຍຫາຍລົ້ມຈົມທີ່ເກີດຈາກຄວາມສາມັກຄີ ຊຶ່ງມີມູລຖານມາຈາກຄວາມສາມັກຄີ ບໍ່ປາກົດມີໃຫ້ເຫັນ. ຂໍ້ນີ້ເຮົາຕ້ອງລະວັງ ບໍ່ຈັ່ງຊັ້ນຈະເຂົ້າໃຈຜິດ.

ໂດຍທົ່ວໄປແລ້ວ ເຂົ້າປາອາຫານທີ່ເຮົາກິນແຕ່ລະມື້ ມີແຕ່ຈະເຮັດໃຫ້ຄົນເຮົາມີເຫື່ອແຮງ ບາດນີ້ມີຄົນອີກພວກຫນຶ່ງ ຫລັງຈາກໄດ້ເຫື່ອແຮງຈາກອາຫານທີ່ກິນແຕ່ລະມື້ແລ້ວ ຊ້ຳຜັດໄປອາລະວາດຊຸກຕ່ອຍຄົນອື່ນ ໃຫ້ໄດ້ຮັບຄວາມເຈັບປວດ ແລ້ວເຮົາຈະຕູ່ເອົາເລື້ອງວ່າຍ້ອນເຂົາໄດ້ເຫື່ອແຮງຈາກເຂົ້ານ້ຳ ຈຶ່ງສາມາດໄປຊຸກຕ່ອຍໄດ້ ມັນກໍຟັງບໍ່ຂຶ້ນ ເພາະ ເຂົ້ານ້ຳເປັນຂອງກາງໆ ບໍ່ວ່າລາວ, ຝຣັ່ງ ຫລືຄົນຊາຕໃດໆກໍຕາມ ຫາກໄດ້ກິນເຂົ້າກິນນ້ຳ ຕ່າງກໍມີເຫື່ອແຮງດ້ວຍກັນທັງໝົດ ຈາກນັ້ນ ກໍແລ້ວແຕ່ໃຜຈະນຳໃຊ້ເຫື່ອແຮງທີ່ໄດ້ມາ ໃນທາງດີຫລືທາງເສັຍ ນັ້ນເປັນເລື້ອງສ່ວນບຸກຄົນ ບໍ່ກ່ຽວກັບເຂົ້າປາອາຫານ.

ທຳນອງດຽວກັນ ຄວາມສາມັກຄີ ລ້ວນແຕ່ມີຜົລດີໃນຕົວຢູ່ແລ້ວ ທັງສ່ວນບຸກຄົນແລະສ່ວນລວມ. ແຕ່ມີພຶຕຕິການບາງຢ່າງ ທີ່ບໍ່ແມ່ນສາມັກຄີທັມ ແຕ່ຄົນເຂົ້າໃຈວ່າແມ່ນ

ສາມັກຄີ ເຊັ່ນ: ຄົນກຸ່ມໜຶ່ງຮ່ວມຫົວກັນກໍ່ການຈາຣະຈົນ, ປຸ້ນສະດົມ... ພວກເຂົາເຈົ້າມີການວາງແຜນປຶກສາຫາລື ແລະຮ່ວມຈິດຮ່ວມໃຈເໝືອນກັນ ເຂົາເຈົ້າກໍວ່າພວກເຂົາເຈົ້າມີຄວາມສາມັກຄີກັນ ແຕ່ທາງສາສນາບໍ່ຍອມຮັບວ່າ ການກະທຳເຊັ່ນນັ້ນເປັນຄວາມສາມັກຄີ ເພາະເຫດຜົລ ໒ ປະການ:

- ບໍ່ມີປໂຍດ ( ມີຜົລເສັຍທັງສ່ວນຕົວແລະສ່ວນລວມ )
- ບໍ່ມີສິລທັມ

**ການແຕກສາມັກຄີ** ຍ່ອມນຳຄວາມເສັຍຫາຍຢ່າງໃຫຍ່ຫລວງ ເປັນຫົນທາງແຫ່ງຄວາມຫາຍນະ ແລະນຳມາຊຶ່ງຄວາມທຸກຂ໌ ໝູ່ຄນະຫລືສັງຄົມໃດແຕກແຍກສາມັກຄີກັນແລ້ວຄວາມລົ້ມຈົມກໍຕາມມາ.

- ຜົວເມັຽແຕກແຍກສາມັກຄີກັນ ຄອບຄົວກໍແຕກ ຢ່າຮ້າງກັນ
- ຄົນໃນບໍຣິສັດແຕກແຍກຄວາມສາມັກຄີກັນ ບໍຣິສັດລົ້ມຈົມ
- ພົລເມືອງແຕກແຍກສາມັກຄີກັນ ລາວກໍເສັຽເອກຣາດ ເປັນຂ້ອຍຂ້າຂອງຊາດອື່ນ.

  ແລະອື່ນໆອີກ.

ທາງທີ່ເຮັດໃຫ້ແຕກແຍກກັນນັ້ນ ມີຫລາຍສາຍເຫດດ້ວຍກັນເຊັ່ນ :

- ສັບຊໍ່ຍຸຍົງກັນ
- ເບິ່ງກັນໃນແງ່ຮ້າຍ
- ຫູເບົາເຊື່ອງ່າຍ
- ຂາດຄວາມຈິງໃຈຕໍ່ກັນ

  ແລະອື່ນໆ ອີກ ນີ້ຍົກມາພໍເປັນຕົວຢ່າງພິຈາຣະນານຳກັນ.

## ໔. ການປູກຄວາມສາມັກຄີທັມ

ເມື່ອເຮົາໄດ້ຊາບເຖິງຄວາມໝາຍ ຜົລປໂຍດແລະໂທດຂອງການແຕກສາມັກຄີ ດັ່ງທີ່ໄດ້ເວົ້າມາຂ້າງເທິງນີ້ແລ້ວ ໃນປະເດັນນີ້ເຮົາຈະໄດ້ເວົ້າເຖິງແນວທາງປະຕິບັດວ່າຈະໄດ້ " ຄວາມສາມັກຄີທັມ " ໂດຍວິທີໃດ ?

ການປູກສາມັກຄີທັມແລະການສມານຄົນທີ່ແຕກສາມັກຄີ ໃຫ້ກັບຄືນມາຖືກຕ້ອງປອງດອງກັນ ຖືວ່າເປັນຄຸນສົມບັດຢ່າງໜຶ່ງທີ່ຊາວພຸທລາວຄວນທຳ.

ວິທີປູກຄວາມສາມັກຄີແລະສມານສາມັກຄີ ພຣະພຸທເຈົ້າຊົງມີພຣະໂອວາດໃຫ້ຍຶດຖື " ສາຣານີຍະທັມ " *,*ກ ເປັນຂໍ້ປະຕິບັດ ມີສາຣະສຳຄັນໂດຍຫຍໍ້ດັ່ງນີ້:

ກ. ຈະເຮັດ ຈະເວົ້າ ຈະຄິດ ສິ່ງໃດກໍໃຫ້ທຳດ້ວຍຄວາມເມຕຕາ.
ຂ. ຮູ້ຈັກເອື້ອເຟື້ອເຜື່ອແຜ່ຕໍ່ຜູ້ອື່ນ.
ຄ. ຮັກສາຄວາມປະພຶຕ ກິຣິຍາມາຣະຍາດ ລະບຽບວິນັຍ ວັທນະທັມ.
ງ. ມີຄວາມຄິດເຫັນຮ່ວມກັບຄົນອື່ນ.

ແມ້ການປະພຶຕປະຕິບັດອື່ນໆ ທີ່ເຫັນວ່າ ຈະເຮັດໃຫ້ໝູ່ຄນະ, ສັງຄົມມີຄວາມສມານສາມັກຄີກັນແໜ້ນແຟ້ນຍິ່ງຂຶ້ນ ກໍຄວນທຳ.

**ລວມຄວາມແລ້ວ ສາມັກຄີທັມຖື "ຈິຕໃຈເປັນສຳຄັນ ".**

---

* ຈາກ " ບັນທຶກທັມ " ( ໜ້າ ໘໘໔ ) ຂອງ ພ.ອ. ປິ່ນ ມຸທຸກັນຕ໌
*ກ ສາຣານີຍະທັມ = ຂໍ້ປະຕິບັດທີ່ເຮັດໃຫ້ຣະລຶກເຖິງກັນ ( ຄືສາມັກຄີກັນ )
(Qualities that have attracting influence) ( ໜ້າ ໖໔໕ )

# ພຣົມວິຫາຣທັມ

## ໑. ອະທິບາຍທົ່ວໄປ

ພຣົມໃນລັດທິສາສນາພຣາມ ໝາຍເຖິງ "ເທພເຈົ້າສູງສຸດຜູ້ສ້າງໂລກ " (Brahma) ຊຶ່ງພຣະພຣົມສຖິດຢູ່ບົນຊັ້ນຟ້າ ເປັນຜູ້ສ້າງໂລກແລະສັພສັຕວ໌ທັງປວງ * ຜູ . ພວກພຣາມ ພາ ກັນວິງວອນ ເພື່ອໃຫ້ພຣະພຣົມຊຣົງໂປຣດ ແມ້ຈະທໍຣະມານຮ່າງກາຍຢ່າງແສນສາ ຫັດກໍ ຍອມ ເພື່ອບັນລຸຄວາມເປັນພຣົມ ຊຶ່ງເປັນເປົ້າໝາຍສູງສຸດຂອງພວກພຣາມ.

ພຣະພຸທສາສນາກໍໄດ້ເວົ້າເຖິງພຣົມເໝືອນກັນ ແລະຮັບວ່າ ສັຕໂລກປະເພດທີ່ຮຽກ ວ່າ " ພຣົມ " ນັ້ນມີຈິງ ແຕ່ບໍ່ຮັບຮອງໃນແງ່ທີ່ວ່າ ພຣະພຣົມເປັນຜູ້ສ້າງໂລກແລະມີ ອຳນາດເໜືອສັຕໂລກປະເພດອື່ນຕາມທີ່ລັດທິພຣາມກ່າວ. ເຊັ່ນຄຳວ່າ " ພຣົມລິຂິຕ " ໝາຍ ຄວາມວ່າ : ກຳນົດໂຊກຊາຕາຊີວິຕທີ່ພຣະພຣົມຂຽນໄວ້ (Line of destiny, handwriting on the wall) ຊຶ່ງກໍເທົ່າກັບວ່າ ຊີວິຕຂອງແຕ່ລະຄົນເປັນໄປຢ່າງໃດ ໃຜກໍບໍ່ອາດແກ້ໄຂໄດ້ ນອກຈາກອ້ອນວອນພຣະພຣົມແກ້ໃຫ້ ເລື້ອງນີ້ພຣະພຸທສາສນາບໍ່ເຫັນດ້ວຍ ແຕ່ສອນວ່າ : " ຊີວິຕເປັນໄປຕາມກັມ " ໝາຍຄວາມວ່າ :

**- ໃຜທຳກັມດີ ກໍໄດ້ຄວາມດີ ແລະເປັນຄົນດີ.**

**- ໃຜທຳກັມຊົ່ວ ກໍໄດ້ຄວາມຊົ່ວ ແລະເປັນຄົນຊົ່ວ.**

ດັ່ງພຸທທະພົຈນ໌ ທີ່ວ່າ :

**" ເຈຕນາຫັງ ພິກຂະເວ ກັມມັງ ວະທາມິ " ***

**ແປວ່າ : " ພິກຂຸທັງຫລາຍ ເຈຕນານັ້ນເອງ ເຮົາຮຽກວ່າ ກັມ ບຸກຄົນຈົງໃຈ ແລ້ວ ຈຶ່ງກະທຳດ້ວຍກາຍ ດ້ວຍວາຈາ ດ້ວຍໃຈ ".**

---

*ຜູ. ສັພສັຕວ໌ = ພາສາທາງສາສນາໝາຍເຖິງ ຜູ້ທີ່ມີໃຈເກາະກ່ຽວຢູ່ໃນໂລກ ຊຶ່ງລວມ ທັງສັຕວ໌ເດັຍຣະສານດ້ວຍ ( ໜ້າ ຜ໓໑ - ຜ໓ຜ )

* ຈາກ " ພຸທທະທັມ " ໜ້າ ໑໔໗ ຂ໑໑ ພຣະທັມມະປິດົກ.

## ໘. ກ. ຄວາມໝາຍ

## - ພຣົມ ໔ ໜ້າ

ຕາມລັດທິ *ໝ ສາສນາພຣາມສອນວ່າ ພຣະພຣົມຜູ້ສ້າງໂລກມີ ໔ ໜ້າ (ພຣົມ ໔ ໜ້າ) ເພື່ອສອດສ່ອງດູແລໂລກທັງ ໔ ທິດ ແລະສອນໃຫ້ພວກພຣາມອ້ອນວອນ ເພື່ອໃຫ້ພຣະພຣົມຊຣົງໂປຣດ ເພື່ອບັນລຸຄວາມເປັນພຣົມ.

ແຕ່ມະຕິທາງສາສນາພຸທວ່າ : ຄຳວ່າພຣົມ ໔ ໜ້ານັ້ນ ເປັນຄຳປຽບທຽບ ສຳລັບຜູ້ຕັ້ງຢູ່ໃນພຣົມວິຫານ ໔ ແລະພຣະພຸທເຈົ້າກັບສອນທັມມະທີ່ຈະເຮັດໃຫ້ມະນຸສກາຍເປັນພຣົມ.

## - ພຣົມວິຫານ ໔

ພຣົມວິຫານທັມ ຄື " ທັມເປັນເຄື່ອງຢູ່ຂອງຜູ້ໃຫຍ່ " ** (four divine states of mind) ມີຫລັກ ໔ ຢ່າງຄື :

| | |
|---|---|
| ກ. ເມຕຕາ | ຄວາມຮັກ |
| ຂ. ກະຣຸນາ | ຄວາມສົງສານ |
| ຄ. ມຸທິຕາ | ຄວາມຍິນດີເມື່ອຄົນອື່ນໄດ້ດີ |
| ງ. ອຸເບກຂາ | ຄວາມວາງເສີຍ |

## ຂ. ອະທິບາຍສັບ

ພຣົມວິຫານທັມ = ພຣົມ + ວິຫານທັມ

- ***ພຣົມ*** : ແປວ່າ " ປະເສີດ " ສາສນາພຣາມເຊື່ອວ່າ ພຣະພຣົມສຖິດຢູ່ບົນສວັນ ໃນສາສນາພຸທກໍໄດ້ເວົ້າເຖິງພຣົມ ແຕ່ໄດ້ສະແດງວ່າ ພວກພຣົມມີໂລກຢູ່ຕ່າງຫາກ ເອີ້ນວ່າ : " ພຣົມມະໂລກ " ໝາຍຄວາມວ່າ ເປັນໂລກຂອງພວກທີ່ມີຈິຕໃຈສູງ ມີຄວາມປະພຶຕອັນປະເສີດ.

  ເນື້ອແທ້ກໍໝາຍເຖິງ ມະນຸສຜູ້ມີຈິຕໃຈອັນປະເສີດນັ້ນເອງ ເຊັ່ນວ່າ : ບິດາມານດາເປັນພຣົມຂອງລູກ, ອຸບາສົກອຸບາສິກາ ພາກັນປະພຶຕພຣົມມະຈັນ ເປັນຕົ້ນ.

---

*ໝ. ລັດທິ = ຄວາມເຊື່ອຖືໃນທາງພິທີກັມ ( Doctrine ) ( ໜ້າ ໕໔໕ )

** ປະມວລສັບສາສນາ ( ໜ້າ ໑໕໗ ) ຂອງ ພ.ອ. ປິ່ນ ມຸທຸກັນຕ໌

ພຣົມ ໃນຄໍາວ່າ ພຣົມວິຫານທັມນີ້ ໝາຍເຖິງຄົນທີ່ເປັນຜູ້ໃຫຍ່ ເຊັ່ນ: ເປັນຫົວໜ້າ ເປັນປະທານ, ເປັນຜູ້ປົກຄອງ,ເປັນຜູ້ອາວຸໂສ ຊຶ່ງຄວາມເປັນຜູ້ໃຫຍ່ໃນທີ່ນີ້ ໝາຍເອົາ " ຈິຕໃຈແລະຄວາມປະພຶຕເປັນຫລັກ " ແມ້ວ່າຄົນທີ່ມີອາຍຸໜ້ອຍ ແຕ່ມີຈິຕໃຈສູງຄວາມ ປະພຶຕອັນປະເສີດ ກໍຖືວ່າເປັນ**ຜູ້ໃຫຍ່**ໄດ້.

- ***ວິຫານທັມ*** ໃນຄໍາວ່າ ພຣົມວິຫານທັມນີ້ ຊຶ່ງແປວ່າ ທັມເປັນເຄື່ອງຢູ່ ຂອງ **ຜູ້ໃຫຍ່** ໝາຍຄວາມວ່າ ເອົາຈິຕໃຈເຂົ້າໄປຕັ້ງໄວ້ໃນທັມມະ ໔ ປະການ " ຢູ່ " ໃນທີ່ນີ້ບໍ່ແມ່ນເອົາຮ່າງກາຍເຂົ້າໄປພໍານັກອາສັຍຢູ່ ເອົາ ຈິຕໃຈເຂົ້າ ໄປຢູ່ ຫລື ເອີ້ນວ່າຢູ່ໃນທັມນັ້ນເອງ.

  ໂດຍທົ່ວໄປແລ້ວ ຈິຕໃຈຂອງຄົນເຮົາຈະປ່ຽນແປງໄປຕາມອາຣົມທີ່ ມາກະທົບເຊັ່ນ : ຄວາມຮັກ, ຄວາມຊັງ,ຄວາມເບື່ອໜ່າຍ, ຄວາມຢ້ານ, ຄວາມ ອິດສາ, ຄວາມອາຄາດພະຍາບາດ ແລະອື່ນໆ. ຄວາມຮູ້ສຶກຂອງຈິຕໃຈ ຈະດີ ຫລືເສັຍ ກໍແລ້ວແຕ່ອາຣົມທີ່ມາກະທົບ ທາງທັມມະທານ ຮຽກວ່າ ໃຈກິນ ອາຣົມເປັນອາຫານ.

ດ້ວຍເຫຕນີ້ພຣະພຸທເຈົ້າຈຶ່ງສອນທັມມະ ຊຶ່ງເປັນທີ່ຢູ່ຂອງໃຈ ຕາມຫລັກ ໔ ປະການ ຂ້າງເທິງນີ້ ຈຶ່ງຈະເໝາະສົມກັບຄວາມເປັນ**ຜູ້ໃຫຍ່**.

## ໝ. <u>ຫລັກທັມແລະຄວາມໝາຍ</u>

**ກ. ເມຕຕາ :** ແປວ່າ ຄວາມປາຖນາໃຫ້ຜູ້ອື່ນມີຄວາມສຸຂ (Loving) ຫລືເອີ້ນວ່າ "ຄວາມຮັກ" ນັ້ນເອງ. ຄວາມຮັກມີ ໘ ປະເພດ :

໑ - ຄວາມຮັກດ້ວຍອໍານາດຣາຄະຕັນຫາ*໑໐ (Pleasure) ເຊັ່ນຄວາມຮັກ ມັກລະຫວ່າງເພດ ເປັນກິເລສ*໑໑ ຊນິດຫນຶ່ງ ເຂົາຈະມີຄວາມຮູ້ສຶກມັກແລະ ກາຍເປັນຄວາມຢາກ ຊຶ່ງທາງທັມມະເອີ້ນວ່າ ຕັນຫາ*໑໘ ( Graving ) ຂໍ້ນີ້ບໍ່ແມ່ນລັກສະນະຂອງຄວາມເມຕຕາ.

---

*໑໐. ຣາຄະ = ຄວາມຍິນດີ, ຄວາມຊອບໃຈ, ຄວາມມັກ (Pleasure)

໑. ເປັນກິເລສທີ່ລະອຽດຝັງຢູ່ໃນຈິຕໃຈຂອງຄົນເຮົາ ຊຶ່ງໄດ້ແກ່ຄວາມ ຕິດໃຈໃນ ຣູປ, ສຽງ, ກິ່ນ, ຣົສ, ສັມພັດ ແລະ ອາຣົມ.

໔ - ຄວາມຮັກທີ່ຮຽກວ່າຄວາມເມຕຕາໃນທີ່ນີ້ ໝາຍເຖິງຄວາມຫວັງດີ ຄວາມປາຖນາຢາກໃຫ້ຜູ້ອື່ນມີຄວາມສຸຂ ເຊັ່ນ : ຄວາມຮັກຂອງພໍ່ແມ່ທີ່ມີຕໍ່ລູກ, ເພື່ອນມິຕຮັກກັນ, ອາຈາຣກັບລູກສິດຮັກກັນເປັນຕົ້ນ.

## ອານິສົງຂອງຄວາມເມຕຕາ

ພຣະພຸທເຈົ້າໄດ້ສະແດງໄວ້ (ໃນເມຕຕານິສັງສະສູຕ) ວ່າ ຜູ້ຈະເຣີນເມຕຕາໄດ້ເຕັມທີ່ແລ້ວ ຈະໄດ້ອານິສົງ( ຜົລ ) ໑໑ ຢ່າງ :

໑. ຕື່ນຢູ່ກໍສະບາຍ
໒. ຫລັບຢູ່ກໍສະບາຍ
໓. ບໍ່ຝັນຮ້າຍ
໔. ເປັນທີ່ຮັກຂອງມະນຸສ
໕. ເປັນທີ່ຮັກຂອງພວກອະມະນຸສ*໑໓ ( ບໍ່ແມ່ນຄົນ )
໖. ເທວະດາຮັກສາ
໗. ແຄ້ວຄາດໄຟ - ຢາພິດ - ແລະສັຕຣູ
໘. ຈິຕຕັ້ງໝັ້ນ
໙. ໜ້າຕາຜ່ອງໃສ
໑໐. ຕາຍບໍ່ຫລົງໄຫລ
໑໑. ຜູ້ບຳເພັນເມຕຕາຢ່າງເຕັມທີ່ ຈະເຂົ້າເຖິງພົມມະໂລກ

---

*໑໑. ກິເລສ = ສິ່ງທີ່ເຮັດໃຫ້ຈິຕເສົ້າໝອງ ( Evil ) ( ໜ້າ ໓໗ )
*໑໒. ຕັນຫາ = ຄວາມຢາກ (Graving ) ( ໜ້າ ໑໔໙ )
໑. ຕັນຫາໝາຍເຖິງຄວາມຢາກ ຊຶ່ງຝັງຢູ່ໃນຈິຕຂອງສາມັນຊົນທົ່ວໄປ.
*໑໓. ອະມະນຸສ = ບໍ່ແມ່ນຄົນ (Unhuman being ) ( ໜ້າ ໖໘໕ )
ນ. ສັຕໂລກປະເພດອື່ນນອກຈາກຄົນ ສະເພາະຢ່າງຍິ່ງໝາຍເຖິງພວກຜີປີສາດ.

# ຂໍ້ຄວນຊາບ

- ໃນສະພາສັງຄົມປັດຈຸບັນນີ້ ຜູ້ມີຈິດເມຕຕາເປັນພື້ນ ບາງຄັ້ງອາດຕົກເປັນເຫຍື່ອຂອງຄົນບໍ່ດີ.
- ຄວາມເມຕຕາມີຫລາຍຂັ້ນຫລາຍລະດັບ ກໍລະນີໃດ ເຫດການແບບໃດ ຕ້ອງຮູ້ຈັກເລືອກແລະພິຈາຣະນາໃຫ້ຖີ່ຖ້ວນ ໂດຍໃຊ້ປັນຍາ*໑໔ ບໍ່ດັ່ງນັ້ນຈະເປັນພັຍອັນຕະລາຍແກ່ຕົນເອງແລະຜູ້ອື່ນ.
- ໃນຄຳສອນ ( ບົດສວດມົນ ) ຂອງສາສນາພຸທ ມີບົດຫນຶ່ງທີ່ວ່າ " ແຜ່ເມຕຕາ " ມີຂໍ້ຫນຶ່ງເວົ້າວ່າ ແຜ່ເມຕຕາໄປຍັງຄົນທີ່ເປັນສັຕຣູກັນຈິງໆ ໂດຍເລີ້ມຈາກຄົນທີ່ຂັດໃຈກັນເລັກນ້ອຍ ຈົນເຖິງຂັ້ນຈະຢູ່ຮ່ວມໂລກດຽວກັນບໍ່ໄດ້. ຂໍ້ນີ້ປະຕິບັດຍາກ ເພາະຮຽກຮ້ອງເຖິງການຝຶກຝົນຈິດໃຈໃຫ້ສູງພໍສົມຄວນ ຈຶ່ງປະຕິບັດໄດ້.

ໆ ລ ໆ

**ຂ. ກະຣຸນາ** : ແປວ່າຄວາມສົງສານ ( Compassion ) ໝາຍຄວາມວ່າ ຄວາມຮູ້ສຶກສົງສານ ຢາກໃຫ້ເຂົາເຈົ້າພົ້ນທຸກຂ໌ ເຊັ່ນ: ເຫັນຄົນເຈັບໄຂ້, ເຫັນຄົນຖືກອຸບັດເຫດ, ເຫັນຄົນຢູ່ໃນສະພາບລຳບາກ ຊຶ່ງລວມທັງສັດເດັຍຣະສານດ້ວຍ.

ຄົນທີ່ມີຄວາມກະຣຸນາໃນຈິດໃຈນັ້ນ ເຂົາຖືເອົາຄວາມທຸກຂ໌ຂອງຄົນອື່ນເປັນອາຣົມ ມີຄວາມສະເທືອນໃຈເມື່ອເຫັນຫລືຊາບຂ່າວວ່າເຂົາເຈົ້າຕົກທຸກຂ໌ໄດ້ຍາກ ຫາທາງຊ່ວຍເຫລືອເຂົາເຈົ້າຕາມຈັງຫວະໂອກາດທີ່ຕົນເອງສາມາດເຮັດໄດ້ ແມ້ສຸດວິສັຍທີ່ຈະຊ່ວຍເຫລືອໄດ້ ກໍຮູ້ສຶກເອັນດູສົງສານ.

ຄົນທີ່ຂາດຄວາມກະຣຸນາໃນໃຈ ເຂົາເຈົ້າຈະສະແດງອາການອອກມາດັ່ງນີ້ ເຊັ່ນ:

- ເຍາະເຍີ້ຍ ຊ້ຳເຕີມຄົນທີ່ໄດ້ຮັບຄວາມທຸກຂ໌ .
- ດີໃຈເມື່ອເຫັນຄົນອື່ນຕົກຢູ່ໃນສະພາບລຳບາກ.
- ເມີນເສີຍ ບໍ່ສົນໃຈເມື່ອເຫັນຄົນອື່ນຕົກທຸກຂ໌ໄດ້ຍາກ.

ໆ ລ ໆ

---

*໑໔ ປັນຍາ : ຄວາມຮູ້ທົ່ວ ( Wisdom, intelligence ) ( ໜ້າ ໓໔໘ )

ໂດຍສະເພາະ ຜູ້ທີ່ມີໜ້າທີ່ປົກຄອງຄົນ ຫລືເປັນທີ່ເພິ່ງຂອງຄົນອື່ນ ສົມຄວນຍຶດຖື ທັມມະຂໍ້ນີ້ໄວ້ໃນໃຈ ແລ້ວຢ່າງອື່ນໆ ກໍຈະຕາມມາທີຫລັງ ເຊັ່ນ: ຄວາມຮັກ, ຄວາມ ເຄົາຣົບນັບຖື, ບາຣະມີ... ແລະຈະສາມາດຄອງໃຈຄົນທີ່ຢູ່ໃຕ້ການປົກຄອງຂອງຕົນໄດ້.

**ຄ. ມຸທິຕາ :** ແປວ່າ ຄວາມຍິນດີເມື່ອເຫັນຄົນອື່ນໄດ້ດີ (sympathetic joy ) ໝາຍຄວາມວ່າດີອົກດີໃຈ ສັນຣະເສີນເຂົາເຈົ້າເມື່ອເຂົາເຈົ້າໄດ້ດີ ເຊັ່ນ: ເຂົາເຈົ້າ ສອບເສັງໄດ້ກໍຊົມເຂົາເຈົ້າ, ເຂົາເຈົ້າໄດ້ເລື່ອນຍົດເລື່ອນຊັ້ນກໍດີໃຈນຳເຂົາເຈົ້າ, ເຂົາເຈົ້າມີ ໂຊກມີລາບກໍດີໃຈນຳເຂົາເຈົ້າ,ເຂົາເຈົ້າລອດພົ້ນຈາກພັຍອັນຕະຣາຍມາໄດ້ກໍດີໃຈນຳເຂົາເຈົ້າ

ລວມຄວາມແລ້ວເຫັນເຂົາເຈົ້າໄດ້ດີຫລືທຳຄວາມດີ ເຮົາກໍດີໃຈນຳເຂົາເຈົ້າແລະ ສນັບສນູນເຂົາເຈົ້າ.

ໃນທາງປະຕິບັດ ເຮົາອາດໄປສະແດງຄວາມຍິນດີຕໍ່ເຂົາເຈົ້າ, ໂທຣະສັບໄປຫາຫລື ຖ້າຢູ່ໄກກໍຂຽນໜັງສືໄປ ແລະວິທີອື່ນໆ ຕາມແຕ່ສະດວກແລະສົມຄວນທີ່ທາງສັງຄົມ ນິຍົມ ກັນທຳ.

ກົງກັນຂ້າມຜູ້ທີ່ຂາດມຸທິຕາທັມໃນຈິດໃຈແລ້ວ ເມື່ອເຫັນຄົນອື່ນໄດ້ດີ ກໍຮູ້ສຶກບໍ່ ສະບາຍໃຈ ຢ້ານຄົນອື່ນຈະໄດ້ດີລື່ນຕົນເອງ. ລວມຄວາມແລ້ວຕົນເອງບໍ່ດີໃຈເມື່ອຄົນອື່ນໄດ້ ດີ.

ຂໍ້ຄວນລະວັງ

- ຖ້າໄປຍິນດີນຳຄວາມຊົ່ວຫລືຄວາມທຸກຂ໌ຂອງຄົນອື່ນ ເຊັ່ນຕົວຢ່າງ: ໂຈນຜູ້ຮ້າຍທຳ ການປຸ້ນສະດົມ ຕຳຣວດທັງກົມນຳຈັບບໍ່ໄດ້ ເຮົາຈະໄປຍິນດີນຳໂຈນວ່າພວກເຂົາເຈົ້າ ເກັ່ງ, ສລາດ ສາມາດຫລົບຫລີກການຕາມລ່າຂອງຕຳຣວດໄດ້ ຢ່າງນີ້ບໍ່ແມ່ນມຸທິຕາ.
- ເມື່ອຄົນທີ່ເຮົາບໍ່ຖືກນິສັຍກັບເຂົາເຈົ້າ, ບໍ່ກິນເສັ້ນກັບເຂົາເຈົ້າ, ບໍ່ມັກໜ້າເຂົາເຈົ້າ ໄດ້ຮັບຄວາມທຸກຂ໌ທາງກາຍ - ໃຈ ເຮົາຊ້ຳຜັດດີອົກດີໃຈ ຢ່າງນີ້ບໍ່ແມ່ນມຸທິຕາ.

ທັມມະຂໍ້ " ມຸທິຕາ " ແມ່ນຖືເອົາຄວາມດີຂອງຄົນອື່ນມາເປັນອາຣົມ*໑໕ ເທົ່ານັ້ນ.

---

*໑໕ ອາຣົມ : ສິ່ງທີ່ຈິດສເວີຍ (Temper, mood ) ( ໜ້າ ໗໐໓ )
ມ. ອາຣົມ ຄືຄວາມຮູ້ສຶກຂອງຈິດຕໍ່ສິ່ງແວດລ້ອມຕ່າງໆ.

**໗. ອຸເບກຂາ :** ຫລື ອຸເປກຂາ ແປວ່າ ຄວາມວາງເສີຍ ( Equanimity ) ໝາຍຄວາມວ່າ ວາງໃຈເປັນກາງ ໃນເມື່ອຈຳເປັນຈະຕ້ອງຮັກສາຄວາມຍຸຕິທັມ ເຊັ່ນຜູ້ພິພາກສາຈະຕັດສິນຄະດີ ຕ້ອງທຳໃຈເປັນກາງ ບໍ່ອຳອຽງເພາະຮັກເພາະຊັງ ເພື່ອໃຫ້ການຕັດສິນເປັນໄປຢ່າງຍຸຕິທັມ ແຕ່ຖ້າຫາກສຸດວິສັຍທີ່ຈະຊ່ວຍເຂົາເຈົ້າໄດ້ ກໍໃຫ້ຕັດໃຈເສັຽ ຢ່າງນີ້ເປັນອຸເບກຂາ.

ທັມມະຂໍ້ນີ້ປະຕິບັດຍາກ ຕ້ອງທຳຄວາມເຂົ້າໃຈໃຫ້ດີ ບໍ່ເຊັ່ນນັ້ນຈະເຂົ້າໃຈຜິດ, ເຫັນຜິດແລະປະຕິບັດຜິດ.

ຈົ່ງສັງເກດຈາກຕົວຢ່າງຂ້າງລຸ່ມນີ້ :

- ອຸເບກຂາຄືຄວາມວາງເສີຍ ເຊັ່ນ : ເຫັນຄົນເຮັດຜິດແລ້ວຖືກຈັບກຸມລົງໂທດ ຖ້າເຮົາຈະເຂົ້າຂ້າງເຂົາເຈົ້າ ກໍຜິດເສັຍຄວາມຍຸຕິທັມ ຈົ່ງຕ້ອງວາງໃຈເປັນກາງ ຄືບໍ່ຊ່ວຍເຂົາເຈົ້າແບບຜິດໆແລະກໍບໍ່ຊ້ຳເຕີມເຂົາເຈົ້າ.
- ເມື່ອເຫັນຄົນອື່ນຢູ່ໃນສະພາບລຳບາກ ຕົກທຸກຂ໌ໄດ້ຍາກ ຕົນເອງພໍຊ່ວຍໄດ້ ແຕ່ກໍວາງເສີຍຢູ່ ຢ່າງນີ້ບໍ່ແມ່ນອຸເບກຂາ ເປັນຄົນໃຈຈືດ.
- ຕົນເອງກະທຳຄວາມຜິດ ຄົນອື່ນວ່າກ່າວຕັກເຕືອນ ກໍເສີຍຢູ່ ເຂົ້າຫູຊ້າຍອອກຫູຂວາ ບໍ່ສົນໃຈວ່າເຂົາເຈົ້າຈະເວົ້າຫຍັງໃຫ້ ນີ້ບໍ່ແມ່ນອຸເບກຂາ ແຕ່ເປັນຄົນດື້ດ້ານຫົວແຂງ.

ຕົວຢ່າງອື່ນໆ ກໍມີອີກມາກມາຍ ນີ້ຍົກມາພໍເປັນແນວທາງ.

ອຸເບກຂານີ້ເຮົາຈະໄດ້ມາແບບໃດ ? ຫລືເຮັດຢ່າງໃດຈິດໃຈຈຶ່ງຈະມີອຸເບກຂາ ? ຂໍ້ນີ້ສາສນາພຸທມີຄຳສອນໄວ້ຢ່າງກວ້າງຂວາງ ເພື່ອສະດວກໃນທາງປະຕິບັດ ຄຣູບາອາຈາຣທ່ານໄດ້ແນະນຳ " ຕ້ອງເວັ້ນຈາກອະຄະຕິທັງ ໔ " ຄືບໍ່ໃຫ້ໃຈອຳອຽງເພາະ :

- ຄວາມຮັກ
- ຄວາມຊັງ
- ຄວາມໂງ່
- ຄວາມຢ້ານກົວ

໔ ຢ່າງນີ້ເປັນແນວທາງປະຕິບັດ ເພື່ອໃຫ້ຈິດໃຈຕັ້ງຢູ່ໃນອຸເບກຂາແລະຈະເຮັດໃຫ້ເກີດມີຄວາມຍຸຕິທັມ.

## <u>໔. ສລູບ</u>

ພຣົມວິຫາຣ ໔ ເປັນຫລັກທັມໝວດຫນຶ່ງທີ່ສຳຄັນ ເປັນແນວທາງປະຕິບັດທີ່ເຮັດໃຫ້ຄົນເຮົາມີຈິຕໃຈສູງ ມີຄວາມປະພຶຕອັນປະເສີດ ເໝືອນເຮືອນເຮົາມີ ໔ ຫ້ອງ ໂອກາດໃດຄວນຈະເຂົ້າໄປຢູ່ໃນຫ້ອງໃດ ຄວນພິຈາຣະນາ.

ຊາວພຸທລາວເຮົາ ສົມຄວນທີ່ຈະຍຶດໝັ້ນພຣົມວິຫາຣ ໔ ໄວ້ໃນຈິຕໃຈ ເພາະຈະເປັນພື້ນຖານອັນດີທີ່ເຮົາຈະຢູ່ຮ່ວມກັນໃນສັງຄົມຢ່າງສັນຕິ. ພຣົມວິຫາຣ ໔ ນີ້ ທຸກຄົນສາມາດປະຕິບັດໄດ້ ບໍ່ວ່າຜູ້ໃຫຍ່ທີ່ມີໜ້າທີ່ຮັບຜິດຊອບດູແລຄຸ້ມຄອງຄວາມສຸຂທຸກຂ໌ຂອງຜູ້ອື່ນ, ພຣະສົງອົງຄະເຈົ້າ ຕລອດຮອດຄົນສາມັນທັມມະດາທຸກຊັ້ນທຸກວັຍ ບໍ່ໝາຍຄວາມວ່າ ຕ້ອງເຂົ້າວັດຟັງທັມຈຶ່ງຈະປະຕິບັດພຣົມວິຫາຣ ໔ ໄດ້.

ຈາກການອະທິບາຍພຣົມວິຫາຣ ໔ ມາຂ້າງເທິງນີ້ ທ່ານຜູ້ອ່ານພໍຈະແນມເຫັນເຖິງຜົລປໂຍດ ທີ່ຜູ້ໃຫຍ່* ຕັ້ງຢູ່ໃນພຣົມວິຫາຣ ໔ ແລະຜົລເສັຍ ທີ່ຜູ້ໃຫຍ່* ຂາດພຣົມວິຫາຣ ໔ ດ້ວຍຕົນເອງ ຕົວຢ່າງກໍມີມາກມາຍ ຂໍໃຫ້ທ່ານຜູ້ອ່ານນຶກຫາຕົວຢ່າງເອງກໍແລ້ວກັນ.

### ລວມຄວາມແລ້ວ

| | | | | |
|---|---|---|---|---|
| ກ. **ເມຕຕາ** | ຄື | ຄວາມຮັກ | ມຸ້ງໝາຍ : | ຄວາມຫວັງດີຕໍ່ຜູ້ອື່ນ |
| ຂ. **ກະຣຸນາ** | ຄື | ຄວາມສົງສານ | ມຸ້ງໝາຍ : | ຝຶກໃຈໃຫ້ຮູ້ສຶກເສົ້າສລົດຕໍ່ຄວາມວິບັຕຂອງຄົນອື່ນ |
| ຄ. **ມຸທິຕາ** | ຄື | ຄວາມຍິນດີ | ມຸ້ງໝາຍ : | ສນັບສນູນຄວາມດີຂອງຜູ້ອື່ນ ( ບໍ່ອິດສາ ) |
| ງ. **ອຸເບກຂາ** | ຄື | ຄວາມວາງເສີຍ | ມຸ້ງໝາຍ : | ຄວາມຍຸຕິທັມ ( ວາງຕົວເປັນກາງ ) |

---

* ຜູ້ໃຫຍ່ : ຄວາມໝາຍຂອງ" ຜູ້ໃຫຍ່" ໃນທີ່ນີ້ ໃຫ້ເບິ່ງຄືນ ໜ້າ ໑໖ - ໑໗ ໃນວັກທີ່ອະທິບາຍຄວາມໝາຍຂອງ " ພຣົມ " ແລະ " ວິຫາຣທັມ ".

# ຄຳໄຫວ້ພຣະບາງ

ນະມາມິ ສິຣະສາ ໄມຫັງ ພຸທຣູປັງ
ມະໂນຣະມັງ ລັງກາທີ ປາຄະຕັນເຍ
ຕັງນະຣະເທວາ ພິປູຊິຕັງ ໂຍໂສ
ສັງຄະຫະ ມາຣັມພິຍາ ຕະເກສຸ ປະຊາສຸຈະ
ອິດທິມັນຕັງ ມະຫາເຕຊັງ
ອະຫັງ ວັນທາມິ ສັພພະທາ

**<u>ຄຳແປ</u>** :

ຂ້າຂໍນ້ອມນະມັສການ ຊຶ່ງພຣະພຸທປະຕິມາກອນ ພຣະບາງເຈົ້າ ພຣະອົງເປັນທີ່ນຳມາ ຊຶ່ງຄວາມເບີກບານ ທີ່ຖືກອັນເຊີນມາຈາກລັງກາທະວີບ ພຣະອົງນີ້ ພຣະອົງເປັນທີ່ສັກກະຣະບູຊາ ແກ່ຄົນແລະເທວະດາທັງຫລາຍ ພຣະຜູ້ມີພຣະພາກເຈົ້າ ອົງໄດ້ຊຣົງປາຣົບສົງເຄາະ ແກ່ພຣະຍາດຕິວົງສ໌ແລະປະຊາຊົນທັງຫລາຍ ພຣະຜູ້ມີພຣະພາກເຈົ້າ ພຣະອົງນັ້ນ ເປັນຜູ້ມີອິດທິຣິດແລະເດຊານຸພາບເປັນອັນມາກກໍຂ້າເທີ້ນ.